ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

PCD

ເລກທີ: 912-
ນະຄອນຫຼວງວຽງຈັນ: ວັນທີ: 28 AUG 2018

ມະຕິກອງປະຊຸມສະພາບໍລິຫານ ຄັ້ງທີ IV/2018

ກອງປະຊຸມສະພາບໍລິຫານບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໄດ້ຈັດຂຶ້ນໃນວັນທີ 28 ສິງຫາ 2018 ເວລາ 10:00 ທີ່ໂຮງແຮມ ຄອນຕິເນັນໂທ ພລາຊາ, ຊັ້ນ 3, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ ນະຄອນຫລວງວຽງຈັນ, ສປປ ລາວ. ກອງປະຊຸມໄດ້ພິຈາລະນາ ແລະ ມີມະຕິເປັນເອກະພາບກັນດັ່ງນີ້:

1. ເຫັນດີຮັບຮອງເອົາບົດບັນທຶກກອງປະຊຸມສະພາບໍລິຫານ ຄັ້ງທີ III/2018 ລົງວັນທີ 14 ພຶດສະພາ 2018;
2. ເຫັນດີຮັບຮອງເອົາບົດລາຍງານຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2018 ເຊິ່ງຜູ້ກວດສອບບັນຊີພາຍນອກໄດ້ທົບທວນແລ້ວ ແລະ ໃຫ້ນຳເລື່ອງນີ້ ລາຍງານຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018 ເພື່ອພິຈາລະນາຮັບຮອງ;
3. ເຫັນດີບໍ່ຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2018 ເນື່ອງຈາກວ່າ ບໍລິສັດຍັງບໍ່ທັນໄດ້ຮັບການຊຳລະໜີ້ຈາກພາກລັດຖະບານ ພາຍຫຼັງທີ່ມີການກໍ່ສ້າງສຳເລັດ. ດັ່ງນັ້ນ, ກອງປະຊຸມສະພາບໍລິຫານຂອງບໍລິສັດ ຈຶ່ງເຫັນດີເລື່ອນການຈ່າຍເງິນປັນຜົນໃຫ້ກັບນັກລົງທຶນພາຍຫຼັງສິ້ນສຸດປີການບັນຊີ ປີ 2018.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ

ດ້ວຍຄວາມເຄົາລົບນັບຖືຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ
Phousy Construction and Development Public Company

ສີທອງ ພິມມະຈິດ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ, ຊັ້ນ 3, ໂຮງແຮມ ຄອນທິເນັນໂທ ພລາຊາ, ບ້ານ ໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ໂທລະສັບ/ແຟັກ: +856 21 265394.; E-mail: info@pcdlao.com; website: www.pcdlao.com